care®
CARE International in Lao PDR, Nongsangthor Road, Ban Nongsangthor, Saysettha District, Vientiane Capital Lao PDR, P.O Box: 4328, Tel: (856-21) 217 727, 212 991, Fax: (856-21) 217 727, E-mail: Lao.info@care.org

# Press Release

**CARE International in Lao PDR, Ministry of Agriculture and Environment and Private Sector AgcoTech Launch Project to Support Smallholder Farmers in Luang Prabang Province.**

**LUANG PRABANG, LAO PDR – on 17 October 2025** – A Memorandum of Understanding (MOU) was officially signed to launch the Enhancing the Commercial Paravet Project (ECPPL) in Luang Prabang Province. The MOU was signed by **Mrs. Keoamphone Souvannaphoum, Country Director for CARE International in Lao PDR**, and **Dr. Saykham Souksanith, Vice Director of the Luang Prabang Provincial Agricultural and Environment Office**, represented the Ministry of Agriculture and Environment.

The ECPPL project, funded by CARE Denmark and AgCoTech, aims to strengthen the livestock systems of smallholder farmers in Pakxeng District, one of the poorest districts in Luang Prabang Province. The initiative will develop and implement a commercial veterinary service model, ensuring both men and women benefit from the program.

The initiative will also establish a robust monitoring system to measure its social impact and support the generation of Verified Carbon Units (VCUs), which will contribute to reducing global carbon emissions. This comprehensive approach is designed to improve household income and food security for local communities while also contributing to broader environmental goals.

*"The ECPPL project is a powerful example of integrated solution - enhancing food security, improving the livelihoods and addressing environmental challenges,"* **said Keoamphone Souvannaphoum, Country Director for CARE International in Lao PDR**. *"By prioritizing a gender-inclusive approach, we ensure that women, who are central to livestock system, gain the skills and income needed to build household resilience. "*

The project will be implemented in 26 villages in Pakxeng District, Loung prabang Province, from the approval date until December 31, 2026. The initiative is expected to directly benefit 14,641 people (7,137 women) and indirectly benefit another 9,861 people (8,235 women). The project also strengthen gender inclusive paravet system that contributes to overall women participation in pararet at the different levels.

*"This project represents a crucial step toward enhancing capacity of our agricultural sector,"* **said Dr. Sayphone Chanhphomma, Vice of Provincial Agriculture and Environment Office**. *"We look forward to seeing the positive impact this will have on local farmers and their families."*

CARE works globally to end poverty and achieve social justice. In Lao PDR, CARE partners with communities, government agencies, civil society and private sector to empower vulnerable populations—especially women and girls—through inclusive development and resilience-building. Learn more at www.careint.org.la.

**For more information, please contact:**
***Lyxay Phothisut* | *CARE International in Lao PDR* | *Communications Coordinator***
*Address: Nongsangthor Rd, Nongsangthor Village, Saysettha District, Vientiane Capital Office*
*Mobile phone: +856 20 7777 9501 | Email: Lyxay.phothisut@care.org*

care®

CARE International in Lao PDR, Nongsangthor Road, Ban Nongsangthor, Saysettha District, Vientiane Capital Lao PDR, P.O Box: 4328, Tel: (856-21) 217 727, 212 991, Fax: (856-21) 217 727, E-mail: Lao.info@care.org

# ບົດຂ່າວ

**ອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ຮ່ວມກັບ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ພາກເອກະຊົນ ບໍລິສັດແອັກໂກເທັກ ຮ່ວມມືກັນເປີດໂຄງການສົ່ງເສີມຕາໜ່າງສັດຕະວະແພດໃນຮູບແບບທຸລະກິດຢູ່ທີ່ແຂວງຫຼວງພະບາງ**

**ວັນທີ 17 ຕຸລາ 2025 ແຂວງ ຫຼວງພະບາງ, ສປປ ລາວ** ພິທີລົງນາມໃນບົດບັນທຶກຄວາມເຂົ້າໃຈ (MOU) ໄດ້ຈັດຂຶ້ນຢ່າງເປັນທາງການເພື່ອເປີດໂຄງການສົ່ງເສີມຕາໜ່າງສັດຕະວະແພດໃນຮູບແບບທຸລະກິດ ຢູ່ ແຂວງຫຼວງພະບາງ (ECPPL). ບົດບັນທຶກຄວາມເຂົ້າໃຈໄດ້ລົງນາມໂດຍ **ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ, ຜູ້ອຳນວຍການອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ**, ແລະ **ທ່ານ ປອ. ໄຊຄຳ ສຸກສະນິດ, ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ ແຂວງຫຼວງພະບາງ** ໃນນາມຕາງໜ້າກະຊວງກະສິກຳ ແລະ ສິ່ງແວດລ້ອມ.

ໂຄງການສົ່ງເສີມຕາໜ່າງສັດຕະວະແພດໃນຮູບແບບທຸລະກິດ, ໄດ້ຮັບທຶນຈາກ ອົງການແຄຣ໌ເດນມາກ ແລະ ບໍລິສັດແອັກໂກເທັກ, ມີເປົ້າໝາຍເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບການລ້ຽງສັດຂອງຊາວກະສິກອນທີ່ລ້ຽງສັດຂະໜາດນ້ອຍໃນເມືອງປາກແຊງ, ເຊິ່ງເປັນໜຶ່ງໃນເມືອງທີ່ທຸກຍາກຂອງແຂວງຫຼວງພະບາງ. ໂຄງການດັ່ງກ່າວຈະຊ່ວຍພັດທະນາ ແລະ ຈັດຕັ້ງປະຕິບັດຮູບແບບທຸລະກິດການບໍລິການສັດຕະວະແພດທີ່ຄຳນຶງເຖິງຄວາມສະເໝີພາບລະຫວ່າງຍິງ-ຊາຍ, ເພື່ອຮັບປະກັນວ່າທັງຍິງ ແລະ ຊາຍ ຈະໄດ້ຮັບຜົນປະໂຫຍດຈາກໂຄງການ.

ນອກຈາກນີ້, ໂຄງການຍັງຈະຊ່ວຍສ້າງຕັ້ງລະບົບການຕິດຕາມ ແລະ ປະເມີນຜົນທີ່ເຂັ້ມແຂງເພື່ອວັດແທກຜົນກະທົບທາງສັງຄົມ ແລະ ສະໜັບສະໜູນການສ້າງໜ່ວຍງານຄາບອນທີ່ໄດ້ຮັບການຢັ້ງຢືນ (VCUs), ເຊິ່ງຈະປະກອບສ່ວນໃນການຫຼຸດຜ່ອນການປ່ອຍອາຍພິດເຮືອນແກ້ວ. ແນວທາງແບບກວມລວມນີ້ມີຈຸດປະສົງເພື່ອປັບປຸງລາຍໄດ້ໃຫ້ແກ່ຄົວເຮືອນ ແລະ ຄວາມໝັ້ນຄົງທາງດ້ານສະບຽງອາຫານຂອງຊຸມຊົນທ້ອງຖິ່ນ, ພ້ອມທັງປະກອບສ່ວນເຂົ້າໃນເປົ້າໝາຍດ້ານສິ່ງແວດລ້ອມໃນລະດັບສາກົນ.

*"ໂຄງການ ECPPL ແມ່ນຕົວຢ່າງທີ່ສຳຄັນຂອງການແກ້ໄຂບັນຫາແບບຄົບວົງຈອນ ເຊັ່ນ: ການເພີ່ມທະວີຄວາມໝັ້ນຄົງທາງດ້ານສະບຽງອາຫານ , ການປັບປຸງຊີວິດການເປັນຢູ່ ແລະ ການແກ້ໄຂບັນຫາສິ່ງແວດລ້ອມ,"* **ທ່ານ ນາງ ແກ້ວອຳພອນ ສຸວັນນະພູມ, ຜູ້ອຳນວຍການອົງການແຄຣ໌ ນານາຊາດ ປະຈຳ ສປປ ລາວ ກ່າວ**. *"ດ້ວຍການຈັດລຳດັບຄວາມສຳຄັນຂອງວິທີການທີ່ຄຳນຶງເຖິງຄວາມສະເໝີພາບຍິງ-ຊາຍ, ພວກເຮົາຮັບປະກັນວ່າແມ່ຍິງ, ຜູ້ທີ່ມີບົດບາດສຳຄັນໃນລະບົບການລ້ຽງສັດ, ຈະໄດ້ຮັບທັກສະ ແລະ ລາຍຮັບທີ່ຈຳເປັນ ເພື່ອສ້າງຄວາມຢືດຢຸ່ນໃຫ້ແກ່ຄອບຄົວ."*

ໂຄງການຈະໄດ້ຮັບການຈັດຕັ້ງປະຕິບັດໃນ 26 ບ້ານຂອງເມືອງປາກແຊງ, ແຂວງຫຼວງພະບາງ, ໄລຍະເວລາໃນການຈັດຕັ້ງປະຕິບັດແມ່ນ ນັບແຕ່ວັນທີໄດ້ຮັບການອະນຸມັດຈົນເຖິງວັນທີ 31 ທັນວາ 2026. ຄາດວ່າໂຄງການຈະມີຜູ້ໄດ້ຮັບຜົນປະໂຫຍດໂດຍກົງ ຈຳນວນ 14,641 ຄົນ (ຍິງ 7,137 ຄົນ) ແລະ ຜູ້ໄດ້ຮັບຜົນປະໂຫຍດທາງອ້ອມ ຈຳນວນ 9,861 ຄົນ (ຍິງ 8,235 ຄົນ). ໂຄງການຍັງໄດ້ສ້າງຄວາມເຂັ້ມແຂງໃຫ້ແກ່ລະບົບສັດຕະວະແພດຊຸມຊົນ ທີ່ຄຳນຶງເຖິງຄວາມສະເໝີພາບຍິງ-ຊາຍ ເຊິ່ງປະກອບສ່ວນເຂົ້າໃນການມີສ່ວນຮ່ວມຂອງແມ່ຍິງໃນຂະແໜງສັດຕະວະແພດຊຸມຊົນໃນລະດັບຕ່າງ ໆ .

*"ໂຄງການນີ້ເປັນບາດກ້າວທີ່ສຳຄັນຕໍ່ການເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ຂະແໜງກະສິກຳຂອງພວກເຮົາ,"* **ທ່ານ ປອ. ໄຊຄຳ ສຸກສະນິດ, ຮອງຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມ** ໄດ້ກ່າວວ່າ. *"ພວກເຮົາຫວັງວ່າຈະເຫັນຜົນຕອບຮັບໃນທາງທີ່ບວກ ທີ່ຈະເກີດຂຶ້ນຕໍ່ຊາວກະສິກອນ ແລະ ຄອບຄົວຂອງເຂົາເຈົ້າ."*

ອົງການແຄຣ໌ ເຮັດວຽກງານຢູ່ໃນທົ່ວໂລກເພື່ອລຶບລ້າງຄວາມທຸກຍາກໃຫ້ບັນລຸຄວາມຍຸດຕິທຳທາງສັງຄົມ. ໃນ ສປປ ລາວ, ອົງການແຄຣ໌ ໄດ້ເຮັດວຽກຮ່ວມກັບຊຸມຊົນ, ລັດຖະບານ, ອົງການຈັດຕັ້ງທາງສັງຄົມ ແລະ ພາກເອກະຊົນ ເພື່ອສ້າງຄວາມເຂັ້ມແຂງໃຫ້ກຸ່ມຄົນທີ່ມີຄວາມສ່ຽງໂດຍສະເພາະແມ່ຍິງ ແລະ ເດັກ ໂດຍຜ່ານການພັດທະນາແບບມີສ່ວນຮ່ວມ ແລະ ການສ້າງຄວາມຢືດຢຸ່ນ. ສາມາດສຶກສາຂໍ້ມູນເພີ່ມເຕີມໄດ້ທີ່ www.careint.org.la

**For more information, please contact:**
***Lyxay Phothisut | CARE International in Lao PDR | Communications Coordinator***
*Address: Nongsangthor Rd, Nongsangthor Village, Saysettha District, Vientiane Capital Office*
*Mobile phone: +856 20 7777 9501 | Email: Lyxay.phothisut@care.org*